| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບຮັບຮອງການເຄື່ອນໄຫວເປັນທະນາຄານດູແລຊັບສິນ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດຳເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| BoL-LSCO-16 | 27.12.2017 | ສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | K - ການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ເນື່ອງຈາກ ທະນາຄານດູແລຊັບສິນ ແມ່ນມີໜ້າທີ່ໃນການຮັກສາ, ຄຸ້ມຄອງ ລວມທັງ ປະຕິບັດສິດໜ້າທີ່ ແທນຜູ້ລົງທຶນ ໃນສ່ວນຂອງຊັບສິນ (ເງິນ ແລະ ຫລັກຊັບ) ດັ່ງນັ້ນ ຈຶ່ງມີຄວາມຈຳເປັນຢ່າງຍິ່ງ ທີ່ຕ້ອງໄດ້ມີການຮັບຮອງການເຄື່ອນໄຫວການເປັນທະນາຄານດູແລຊັບສິນ ເພື່ອຮັບປະກັນການປົກປ້ອງຄວາມສ່ຽງທີ່ອາດເກີດຂຶ້ນກັບຜູ້ລົງທຶນ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ທະນາຄານທຸລະກິດພາຍໃນ ຫຼື ຕ່າງປະເທດທີ່ມີຈຸດປະສົງເຄື່ອນໄຫວເປັນທະນາຄານດູແລຊັບສິນທີ່ເຮັດໜ້າທີ່ເປັນຜູ້ຮັກສາ ແລະ ຄຸ້ມຄອງຊັບສິນຂອງຜູ້ລົງທຶນ, ສະສາງ-ຊຳລະທຸລະກຳຫລັກຊັບ ແລະ ປະຕິບັດໜ້າທີ່ແທນຜູ້ລົງທຶນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອື່ນ ທີ່ຜູ້ລົງທຶນຄວນຈະໄດ້ຮັບ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | http://www.lsc.gov.la |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | ພາຍຫຼັງໄດ້ຮັບໃບຮັບຮອງການເຄື່ອນໄຫວເປັນທະນາຄານດູແລຊັບສິນແລ້ວ ທະນາຄານດູແລຊັບສິນຕ້ອງປະກາດໃຫ້ມວນຊົນຊາບໂດຍຜ່ານພາຫະນະສື່ມວນຊົນຢ່າງໜ້ອຍ 5 ວັນລັດຖະການຕໍ່ເນື່ອງ ນັບແຕ່ວັນທີ່ໄດ້ຮັບໃບຮັບຮອງເປັນຕົ້ນໄປ. |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາ ໃນການ ພິຈາລະນາ ຄຳຮ້ອງ ໃນ ການອອກ ໃບ ອະນຸຍາດ | 45 | |
| ຄຸນະສົມບັດ ຂອງຜູ້ຂໍໃບ ອະນຸຍາດ | 1. ມີສະພາບຄ່ອງທາງການເງິນທີ່ດີ ແລະ ເປັນທີ່ຍອມຮັບຈາກຜູ້ລົງທຶນ 2. ປະຕິບັດລະບຽບວ່າດ້ວຍຄວາມໝັ້ນຄົງທີ່ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດໄວ້ 3. ມີລະບົບການຄຸ້ມຄອງແລະບໍລິຫານຊັບສິນ, ການກວດກາພາຍໃນ ແລະ ບໍລິຫານຄວາມສ່ຽງລວມທັງລະບົບການຕິດຕາມບັນຊີເງິນແລະບັນຊີຫຼັກຊັບທີ່ຮັບປະກັນແລະຄ່ອງຕົວ 4. ມີລະບົບສະສາງ-ຊຳລະທຸລະກຳຫຼັກຊັບທີ່ຮັບປະກັນແລະຄ່ອງຕົວທັງພາຍໃນແລະຕ່າງປະເທດ 5. ມີລະບົບເຕັກໂນໂລຊີຂໍ້ມູນ-ຂ່າວສານເຊື່ອມໂຍງກັບພາກສ່ວນກ່ຽວຂ້ອງ ແລະ ສາມາດຮັບປະກັນຄວາມປອດໄພສູງ 6. ມີສັນຍາຮ່ວມກັບຕະຫຼາດຫຼັກຊັບລາວ (ສູນຮັບຝາກຫຼັກຊັບ) ແລະ ບໍລິສັດຫຼັກຊັບ 7. ບໍ່ເຄີຍລະເມີດລະບຽບກົດໝາຍແລະຂໍ້ຫ້າມຕ່າງໆ ທີ່ມີລັກສະນະຮ້າຍແຮງໃນຂົງເຂດການເງິນ-ການທະນາຄານ 8. ພະນັກງານຕ້ອງມີຄຸນວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປ ໃນຂະແໜງການເງິນ-ການທະນາຄານ, ການບັນຊີ ຫຼື ຂົງເຂດທີ່ກ່ຽວຂ້ອງ ແລະ ມີປະສົບການໃນຂະແໜງການດັ່ງກ່າວ ສາມປີ ຂຶ້ນໄປ, ບໍ່ເຄີຍຖືກສານຕັດສິນລົງໂທດອາຍາເປັນຕົ້ນໃນສະຖານການສໍ້ໂກງຊັບ, ການຍັກຍອກຊັບ, ການປອມແປງເອກະສານ, ການຮັບຫຼືໃຫ້ສິນບົນ, ການສໍ້ລາດບັງຫຼວງຫຼືການຟອກເງິນ ແລະ ບໍ່ເຄີຍກະທຳຜິດໃນຂະແໜງທຸລະກິດດ້ານຫຼັກຊັບ. 9. ສຳລັບທະນາຄານທຸລະກິດຕ່າງປະເທດທີ່ມີຈຸດປະສົງເຄື່ອນໄຫວເປັນທະນາຄານດູແລຊັບສິນຢູ່ ສປປ ລາວນອກຈາກມີເງື່ອນໄຂຕາມທີ່ກ່າວມາຂ້າງເທິງນີ້ແລ້ວຍັງຕ້ອງມີສັນຍາຮ່ວມກັບທະນາຄານທຸລະກິດໃດໜຶ່ງທີ່ຕັ້ງຢູ່ ສປປ ລາວ ເພື່ອເຮັດໜ້າທີ່ເປັນທະນາຄານຕົວແທນໃນການຊຳລະເງິນຫຼືຫຼັກຊັບ ແລະ ຕ້ອງມາຈາກປະເທດທີ່ອົງການຄຸ້ມຄອງຫຼັກຊັບຂອງ ສປປ ລາວ ມີສາຍພົວພັນຮ່ວມມືໂດຍການເຊັນບົດບັນທຶກຄວາມເຂົ້າໃຈຮ່ວມກັນ. | |
| ມີເຫດຜົນ ໃດບໍ່ທີ່ເຈົ້າ ໜ້າທີ່ ຈະ ປະຕິເສດ ການຂໍໃບ ອະນຸຍາດ? | ໃນກໍລະນີທີ່ຜູ້ຮ້ອງຂໍບໍ່ມີຄຸນສົມບັດແລະບໍ່ສາມາດປະຕິບັດຕາມເງື່ອນໄຂທີ່ກຳນົດໄວ້ໄດ້ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ບໍ່ມີ | 0 |
| ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບ ອະນຸຍາດ | ບໍ່ຕ້ອງມີການຕໍ່ອາຍຸໃບຮັບຮອງ ແຕ່ ຕ້ອງໄດ້ມີການຊໍາລະຄ່າຄຸ້ມຄອງປະຈໍາປີ |

| ຄ່າທໍານຽມ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມຄໍາ ຮ້ອງ ຫລື ບໍ່? | ຄ່າບໍລິການວິຊາ ການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົ ດ |
| ແມ່ນແລ້ວ | 0.00 | 20000000.00 | 5000000.00 | 25000000.00 |
| ຄໍາເຫັນ | ອີງໃສ່: ລະບຽບ ເລກທີ 010/ຄຄຊ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 0.00 | 30000000.00 | 30000000.00 |
| ຄໍາເຫັນ | ວິສາຫະກິດບໍ່ຕ້ອງຕໍ່ອາຍຸໃບອະນຸຍາດ ແຕ່ ຕ້ອງຊໍາລະຄ່າຄຸ້ມຄອງປະຈໍາປີ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| ຊື່ກົດລະບຽບ | ເລກທີ | ວັນທີ | ຄໍາເຫັນ |
| ກົດໝາຍວ່າດ້ວຍ ຫລັກຊັບ | 21/ສພຊ | 10.12.2012 | ພາກທີ IV ສະຖາບັນສື່ກາງດ້ານຫລັກຊັບ ໝວດທີ 3 ທະນາຄານດູແລຊັບສິນ (ມາດຕາ 78 ຫາມາດຕາ 83) |
| ລະບຽບວ່າດ້ວຍ ທະນາຄານດູແລຊັບສິນ | 010/ຄຄຊ | 07.05.2014 | ໝວດທີ 2 ການຂໍອະນຸຍາດເປັນທະນາຄານດູແລຊັບສິນ |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| | | | (ມາດຕາ 3 ຫາມາດຕາ 7) ໝວດທີ 4<br>ພັນທະ ແລະ ຄ່າທໍານຽມ (ມາດຕາ 12) |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ໃບທະບຽນວິສາຫະກິດ ຂອງບໍລິສັດຈໍາກັດ |
| ໃບແຈ້ງໂທດ |
| ຊີວະປະຫວັດ |
| ກົດລະບຽບການດໍາເນີນງານພາຍໃນ |
| ໂຄງຮ່າງການຈັດຕັ້ງຂອງວິສາຫະກິດ |
| ແຜນການດໍາເນີນທຸລະກິດ |
| ໃບຢັ້ງຢືນຖານະທາງດ້ານການເງິນແລະຊັບສິນ |
| ມະຕິກອງປະຊຸມສະພາບໍລິຫານ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| **ປີ** | **ອອກໃໝ່** | **ຕໍ່ອາຍຸ** |
| 2016 | | |